VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ບົດລາຍງານຜົນດຳເນີນທຸລະກິດ 6 ເດືອນຕົ້ນປີ ແລະ ແຜນດຳເນີນທຸລະກິດ 6 ເດືອນທ້າຍປີ 2020 ຂອງ ວຈຊຕ

ສາລະບານ

1.ແນະນຳບໍລິສັດ

2. ວິໄສທັດແລະພາລະກິດ

2.1 ວິໄສທັດ

2.2 ພາລະກິດ

3. ໂຄງຮ່າງການຈັດຕັ້ງ

4. ຜົນການດຳເນີນທຸລະກິດ

4.1 ລາຍໄດ້

4.2 ກຳໄລແລະຂາດທຶນ

4.3 ຊັບສິນທັງໝົດ

4.4 ໜີ້ສິນທັງໝົດ

4.5 ການມອບພັນທະພາສີອາກອນ

5. ວຽກງານສົ່ງເສີມການພັດທະນາທຸລະກິດ

6. ວຽກທີ່ກ່ຽວຂ້ອງຂອງຄະນະກຳມະການ

7. ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ

8.ແຜນການດຳເນີນທຸລະກິດເຖິ່ງທ້າຍປີ2020

1. ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕ່ອນເໜືອຈຳກັດທີ່ຮ່ວມກັນສ້າງຕັ້ງ ຂຶ້ນລະຫວ່າງກຸ່ມບໍລິສັດກໍ່ສ້າງລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ. ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການ ໃນ ວັນທີ 31 ພຶດສະພາ 2019 (ຊື່ຫຼັກຊັບ"VCL"), ທຶນຈົດທະບຽນໃນປະຈຸບັນແມ່ນ 147,199,900,000 ກີບ.

ກິດຈະການຫຼັກຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ ໃນ ສູນການຄ້າ ວຽງຈັນເຊັ້ນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການ ຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການ ເກັບຄ່າເຊົ່າປ້າຍໂຄສະນາ, ການເກັບຄ່າເຊົ່າສຳນັກງານຫ້ອງການ.

ໂດຍຜ່ານການສ້າງເປັນແບຣນຂອງຕົນເອງ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບ ແບບການດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານກາເຟອາເມຊອນ,ຮ້ານມິນິໂຊ ແລະ ຫ່າງຮ້ານທີ່ມີຊື່ສຽງອື່ນໆ, ບໍລິສັດລົດ ໄຟລາວ-ຈີນ, ບໍລິສັດໄຟຟ້າເກົ່າຫລີ, ບໍລິສັດ ປະກັນໄພຮຸ່ງເຄືອໂຊປະເທດອັງກິດ ແລະ ບໍລິສັດທີ່ມີຊື່ ສຽງອື່ນໆ ໄດ້ເຂົ້າມາເຊົ່າພື້ນທີ່ ອາຄານສຳນັກງານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ. ມາເຖິງ ປະຈຸບັນ ວຽງຈັນເຊັ້ນເຕີ ໄດ້ກາຍເປັນສູນກາງການຄ້າ ສູນກາງສຳນັກງານ ສູນກາງທາງດ້ານການເງິນ ແລະ ສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະ ຕິວແບບ ໃນການຮ່ວມມືຂອງລັດຖະບານສອງຊາດລາວ-ຈີນ.

2. ວິໄສທັດແລະພາລະກິດ

2.1 ວິໄສທັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນ ແລະ ສູນກາງການວາງສະແດງຂອງປະເທດ ລາວ.

2.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

3. ໂຄງຮ່າງການຈັດຕັ້ງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

3.1 ໂຄງຮ່າງການຈັດຕັ້ງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ: ປະກອບດ້ວຍສະມາຊິກສະພາ ບໍລິຫານ 11 ທ່ານ, ໃນນັ້ນປະກອບມີຜູ້ອຳນວຍການ.

3.2 ສະພາບໍລິຫານບໍລິສັດວຽງຈັນເຊັ້ນເຕີລາວມະຫາຊົນສະໄໝທີ 2 ປະກອບດ້ວຍ 11 ທ່ານມີ ລາຍຊື່ດັ່ງຕໍ່ໄປນີ້:

1. ທ່ານ ນາງ ໂຈເລີ່ຍ (Ms. Zhou Lei) ເປັນປະທານ
2. ທ່ານ ນາງ ອໍລະໄທ ສັນຕິຄົງຄາ(Ms. Orlathay SANTIKHONGKA) ເປັນຮອງປະທານ
3. ທ່ານ ຫຼີ ສ່ຽວຕົ້ງ (Mr. Li Xiaodong) ເປັນສະມາຊິກ, ຜູ້ອຳນວຍການໃຫຍ່
4. ທ່ານ ເວີ່ຍ ຫວາ (Mr. Wei Hua) ເປັນສະມາຊິກ
5. ທ່ານ ບຸລະພາ ສັນຕິຄົງຄາ(Mr. Bualapha SANTIKHONGKA) ເປັນສະມາຊິກ
6. ທ່ານ ອຸ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ
7. ຊຸນເຟີ່ຍຫູ (Ms. Sun Feihu) ເປັນສະມາຊິກ
8. ທ່ານ ນາງ ເຕີ້ງ ຢຸ່ (Ms. Deng Yu) ເປັນສະມາຊິກອິດສະຫຼະ
9. ທ່ານ ສ່ຽວ ໂຢ່ງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ

10. ທ່ານ ວຽງສະຫວັນ ພັນທະລີ (Mr. Viengsavanh PHANTALY) ເປັນສະມາຊິກອິດສະຫຼະ

11. ທ່ານ ຈໍຊົ່ງ ບົວສີເນັ່ງມາ (Mr. Joxong BouaSiNengMa) ເປັນສະມາຊິກອິດສະຫຼະ

4. ບົດລາຍງານຜົນດຳເນີນທຸລະກິດ 6 ເດືອນຕົ້ນປີ 2020

4.1 ລາຍໄດ້

ຜົນດຳເນີນທຸລະກິດ 6 ເດືອນຕົ້ນປີ 2020, ລາຍໄດ້ຕົວຈິງຈາກການດຳເນີນທຸລະກິດ ຂອງ ບໍລິສັດແມ່ນເປັນເງິນ 56.35 ຮ້ອຍລ້ານກີບ, ຖ້າປຽບທຽບໄລຍະດຽວກັນຂອງປີທີ່ແລ້ວ ແມ່ນລົດລົງ 12%, ໃນນັ້ນ, ລາຍຮັບຈາກການເຊົ່າຮ້ານຂາຍເຄື່ອງແມ່ນເປັນເງິນ 19.95 ຮ້ອຍລ້ານກີບ, ລາຍໄດ້ຈາກ ການໃຫ້ເຊົ່າພື້ນທີ່ຫ້ອງການແມ່ນເປັນເງິນ 24.63 ຮ້ອຍລ້ານກີບ, ລາຍໄດ້ຈາກການຮ່ວມທຸລະກິດແມ່ນ ເປັນເງິນ 3.57 ຮ້ອຍລ້ານກີບ, ລາຍໄດ້ຈາກການໃຫ້ເຊົ່າພື້ນທີ່ຈັດງານແມ່ນເປັນເງິນ 2.48 ຮ້ອຍລ້ານ ກີບ, ລາຍໄດ້ຈາກການໃຫ້ເຊົ່າປ້າຍໂຄສະນາແມ່ນເປັນເງິນ 5.70 ຮ້ອຍລ້ານກີບ. ເຫດຜົນທີ່ລາຍຮັບຫຼຸດ ລົງຈາກແຜນຄາດຄະເນແມ່ນຍ້ອນຜົນກະທົບຈາກການລະບາດພະຍາດອັກເສບປອດເຊື້ອຈຸລະໂລກສາຍ ພັນໃໝ່,ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໄດ້ປະຕິບັດຕາມຄຳສັ່ງຂອງຄະນະກຳມະການສະເພາະ ກິດ ເພື່ອປ້ອງກັນຄວບຄຸມ ແລະ ແກ້ໄຂພະຍາດອັກເສບປອດ ໂດຍຢຸດດຳເນີນກິດຈະການໃນຊ່ວງ ວັນ ທີ 1 ເມສາ- ວັນທີ 3 ພຶດສະພາ 2020.

4.2 ກຳໄລ ແລະ ຂາດທຶນ

ກຳໄລຈາກຜົນດຳເນີນທຸລະກິດ 6 ເດືອນຕົ້ນປີ 2020 ກ່ອນອາກອນທັງໝົດຂອງບໍລິສັດແມ່ນເປັນ ເງິນ 43.65 ຮ້ອຍລ້ານກີບ, ຈາກໄລຍະດຽວກັນຂອງປີ 2019 ມີການຫຼຸດລົງ 37%, ກຳໄລສຸດທິແມ່ນ ເປັນເງິນ 36.49 ຮ້ອຍລ້ານກີບ. ເຫດຜົນທີ່ກຳໄລຫຼຸດລົງຈາກແຜນຄາດຄະເນແມ່ນຍ້ອນມີການແຜ່ ລະບາດພະຍາດອັກເສບປອດສາຍພັນໃໝ່, ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ໄດ້ປະຕິບັດຕາມຄຳ ສັ່ງຂອງຄະນະກຳມະການສະເພາະກິດ ເພື່ອປ້ອງກັນຄວບຄຸມ ແລະ ແກ້ໄຂພະຍາດອັກເສບປອດໂດຍຢຸດ ດຳເນີນກິດຈະການໃນຊ່ວງ ວັນທີ 1 ເມສາ - ວັນທີ 3 ພຶດສະພາ 2020, ແລະ ຍັງບໍ່ທັນໄດ້ມີການປະ

ເມັນຊັບສິນ ໃນ 6 ເດືອນຕົ້ນປີ 2020, ຈະຈ້າງບໍລິສັດປະເມີນມູນຄ່າຊັບສິນທີ່ໄດ້ຮັບການອະນັດຈາກ ສຄຄຊ ເພື່ອມາປະເມີນມູນຄ່າຊັບສິນໃນທ້າຍປີ.

4.3 ລວມຊັບສິນ

ໃນ 6 ເດືອນຕົ້ນປີ 2020, ຊັບສິນທັງໝົດຂອງບໍລິສັດ ແມ່ນເປັນເງິນ 2419.14 ຮ້ອຍລ້ານກີບ ທຽບກັບປີ 2019 ເພີ່ມຂຶ້ນ 6%. ເຫດຜົນທີ່ລວມຊັບສິນເພີ່ມຂຶ້ນ ແມ່ນຍ້ອນວ່າມີການລົງທຶນຮັບຊື້ຊັບ ສິນໃໝ່.

4.4 ໜີ້ສິນ

ໃນ6 ເດືອນຕົ້ນປີ 2020, ໜີ້ສິນທັງໝົດຂອງບໍລິສັດແມ່ນເງິນ 726.75 ຮ້ອຍລ້ານກີບເຊິ່ງທຽບປີ 2019 ຫຼຸດລົງ 4%. ເຫດຜົນຂອງໜີ້ສິນຫຼຸດລົງແມ່ນຍ້ອນວ່າມີການຊໍາລະດອກເບ້ຍເງິນກູ້ທີ່ເກີດມາ ກ່ອນ ວັນທີ 13 ທັນວາ ປີ 2020 .

4.5ການມອບພັນທະອາກອນ

ໃນ 6 ເດືອນຕົ້ນປີ 2020, ການມອບພັນທະອາກອນປະຈໍາປີທັງໝົດຂອງບໍລິສັດແມ່ນເປັນເງິນ 6.49 ຮ້ອຍລ້ານກີບ, ໃນນັ້ນ ອາກອນກໍາໄລເປັນເງິນ 2.16 ຮ້ອຍລ້ານກີບ, ອາກອນມູນຄ່າເພີ່ມເປັນເງິນ 4.30 ຮ້ອຍລ້ານກີບ, ອາກອນເງິນເດືອນພະນັກງານເປັນເງິນ 0.03 ຮ້ອຍລ້ານກີບ.

5. ວຽກງານສົ່ງເສີມການພັດທະນາທຸລະກິດ

ໃນໄລຍະ 6 ເດືອນຕົ້ນປີ 2020ເປັນຕົ້ນມາ ຍ້ອນໄດ້ຮັບຜົນກະທົບຈາກການລະບາດພະຍາດແຕ່ ເດືອນ ກຸມພາ ປີ 2020 ເປັນຕົ້ນມາ, ລັດຖະບານ ສປປ ລາວໄດ້ອອກແຈ້ງການຢ່າງຕໍ່ເນື່ອງແມ່ນໃຫ້ຢຸດ ຊົ່ວຄາວການຕ້ອນຮັບນັກທ່ອງທ່ຽວຈາກຕ່າງປະເທດ ນັກທ່ອງທ່ຽວທີ່ມາທ່ຽວປະເທດລາວ ສ່ວນຫຼາຍ ແມ່ນມາຈາກປະເທດໄທຈີນ ຫວຽດນາມ ເກົາຫຼີ ແລະ ອື່ນໆ. ຢູ່ໃນປະເທດດັ່ງກ່າວ ມີການລະບາດຢ່າງ ລຽນຕິດບັນດາປະເທດທີ່ກ່າວມາຂ້າງເທິງນັ້ນໄດ້ອອກນະໂຍບາຍເພື່ອຫ້າມນັກທ່ອງທ່ຽວໄປທ່ຽວ ຕ່າງປະເທດ, ແລະ ລັດຖະບານ ສປປ ລາວ ກໍໄດ້ມີການສັ່ງເຈາະການຕ້ອນຮັບນັກທ່ອງທ່ຽວຕ່າງປະເທດ

ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດ, ມາດຕະການດັ່ງກ່າວນີ້ໄດ້ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຂອງຫ້າງ. ອີກຢ່າງໜຶ່ງ ລັດຖະບານລາວໄດ້ສັ່ງໃຫ້ຍົກເລີກກິດຈະກຳເຕົ້າໂຮມຕ່າງໆ ໄດ້ເຮັດໃຫ້ການເຊົ່າພື້ນທີ່ຈັດກິດຈະກຳຕ່າງໆຂອງບໍລິສັດພວກເຮົາມີການຍົກເລີກ. ໂດຍສະເພາະແມ່ນ ໃນວັນທີ 29 ມີນາ ນີ້, ທ່ານນາຍົກລັດຖະມົນຕີ ໄດ້ອອກແຈ້ງການ ເລກທີ 6 ກ່ຽວກັບໃນທົ່ວປະເທດລາວໃຫ້ປິດເມືອງ ຢຸດດຳເນີນກິດຈະກຳສົ່ງຜົນກະທົບໃຫ້ ວຽງຈັນເຊັ້ນເຕີ ຢຸດໃຫ້ບໍລິການຊົ່ວຄາວ.

ສຳລັບທຸລະກິດພາກສ່ວນຮ້ານຂາຍຍ່ອຍແລະສຳນັກງານຫ້ອງການ, ຄູ່ແຂ່ງນັບມື້ນັບຫຼາຍຂຶ້ນໃນ 6 ເດືອນຕົ້ນປີ 2020, ນອກຈາກໄອເຕັກ ແລະ ຕະຫຼາດເຊົ້າແລ້ວ, ປາກຊັນໄດ້ເລີ່ມເປີດບໍລິການ ເຊັ້ນມີທຸລະກິດຟຸດຄ໋ອດຊຸບເປີມາກເກັດ ແລະ ອອກແຮງຊຸກຍູ້ການຊອກຫາຜູ້ລົງທຶນໃນພື້ນທີ່ວ່າງ. ສ່ວນສຳນັກງານຫ້ອງການ ກໍຄືຕຶກອາຄານໂຄລາວທາວເວີ ຕຶກອາຄານວັງວຽງທາວເວີ ຄາວພຣາຊ້າ ໄດ້ຮັກສາລະດັບອັດຕາສ່ວນໃຫ້ເຊົ່າຢ່າງໝັ້ນຄົງ. ຕຶກອາຄານກວນຊິນສາກົນກໍໄດ້ເລີ່ມການຊອກຫານັກລົງທຶນຢ່າງເປັນທາງການ ຄາດວ່າອີກບໍ່ຄົນຊິມີການເປີດບໍລິການ. ແຕ່ ວຽງຈັນເຊັ້ນເຕີ ຍັງຮັກສາຈຸດເດັ່ນທີ່ຫ້າງຮ້ານ ແລະ ສຳນັກງານຫ້ອງການຢູ່ໃນອາຄານດຽວກັນ, ສ້າງສິ່ງອຳນວຍຄວາມສະດວກໃນການຊື້ເຄື່ອງ ພ້ອມດ້ວຍການດຳເນີນວຽກຫ້ອງການ, ປັບປຸງຄຸນນະພາບການບໍລິການຢ່າງຄົບຊຸດ. ໃນລະຫ່ວ່າງການລະບາດຂອງໂຄວິດ 19, ວຈຊຕ ໄດ້ມີນະໂຍບາຍພິດເສດ ເພື່ອສະໜັບສະໜຸນໃຫ້ຜູ້ດຳເນີນທຸລະກິດ ແລະ ຮັກສາອັດຕາສ່ວນການເຊົ່າພື້ນທີ່ໃຫ້ໝັ້ນຄົ່ງ, ແລ້ວປິດໃຫ້ບໍລິການຊົ່ວຄາວ ໃນເດືອນພຶດສະພາ ເປັນຕົ້ນມາ, ວຈຊຕ ໄດ້ຕອບສະໜອງໃຫ້ທັນກັບສະພາບຄວາມຕ້ອງການຂອງຕະຫຼາດ ສ້າງຄວາມເຂັ້ມແຂງໃນການບໍລິຫານທຸລະກິດ, ພາຍໃຕ້ເງື່ອນໄຂຂອງການຮັບປະກັນຄວາມປອດໄພບວກກັບການຕອບສະໜອງທີ່ເປັນທີ່ນິຍົມເຊັ່ນການຈັດງານວ່າງສະແດງລົດໃໝ່ ບັນລຸການບໍລິໂພກທີ່ດີກັບຄືນມາ.

ໃນ 6 ເດືອນຕົ້ນປີ 2020, ວຈຊຕ ໄດ້ຈັດງານກິດຈະກຳທັງໝົດ 22 ງານ ເຊັ່ນງານວ່າງສະແດງສິນຄ້າປະເທດຍີ່ປຸ່ນໄທ, ງານເປີດຕົວລົດໃໝ່ GAC Trumpchi, ງານວ່າງສະແດງລົດ Isuzu Nissan, ຈັນເດັກນ້ອຍສາກົນ ເພື່ອດຶງດູດຜູ້ບໍລິໂພກມາໃຊ້ບໍລິການໃນຫ້າງ. ໃນນັ້ນ, 13 ກິດຈະກາ

ແມ່ນພວກເຮົາໄດ້ຈັດຂຶ້ນເອງ ໄດ້ສ້າງທາງບວກໃນການຟື້ນຟູບັນຍາກາດການຊື້ຂາຍເຄື່ອງ. ສໍາລັບອາຄານ ສໍານັກງານ, ສຸ້ຊຸ່ນສ້າງການປະສານງານ ແລະ ການພັດທະນາແບບປະສົມປະສານກັບສູນການຄ້າເພື່ອເປັນ ສິ່ງອໍານວຍຄວາມສະດວກເຊິ່ງກັນ ແລະ ກັນ, ແລະ ຖືເອົາສູນການຄ້າເປັນປະໂຫຍດໃນວຽກງານການ ຊອກຫາຜູ້ເຊົ່າອາຄານສໍານັກງານ, ແລະ ນໍາພາພະນັກງານຫຼາຍຄົນທີ່ປະຈໍາໃນອາຄານສໍານັກງານໃຫ້ໄປ ບໍລິໂພກໃນສູນການຄ້າ. ພາຍໃນ 6 ເດືອນຕົ້ນປີ 2020, ວຈຊຕ ໄດ້ເຊັນສັນຍາໃຫມ່ກັບ 2 ບໍລິສັດທີ່ ມາເຊົ່າອາຄານຫ້ອງການ, ລວມທັງໝົດ 12 ບໍລິສັດ, ອັດຕາສ່ວນການໃຫ້ເຊົ່າແມ່ນເປັນ 80%. ວຈຊຕ ຈະເສີບຕໍ່ພະຍາຍາມຊອກຫາບໍລິສັດໃໝ່ເຂົ້າມາເຊົ່າພື້ນທີ່ຫ້ອງການ ເພີ່ມທະວີສ້າງລາຍໄດ້ໃຫ້ບໍລິສັດ ໃນ ອານະຄົດບົນພື້ນຖານຮັກສາຈໍານວນວິສາຫະກິດທີ່ເຊົ່າ.

6. ວຽກທີ່ກ່ຽວຂ້ອງຂອງຄະນະກໍາມະການ

6.1. ໃນ 6 ເດືອນຕົ້ນປີ 2020, ກອງປະຊຸມລະດັບຄະນະການມະການໄດ້ຈັດຕັ້ງທັງໝົດ 4 ຄັ້ງ. ໃນນັ້ນກອງປະຊຸມສະພາບໍລິຫານ 3 ຄັ້ງ, ກອງປະຊຸມຜູ້ຖືຮຸ້ນ 1 ຄັ້ງ.

6.2 ຄະນະກໍາມະການກວດສອບລາຍການທີ່ກ່ຽວພັນໄດ້ເປີດກອງປະຊຸມ 1 ຄັ້ງ ເພື່ອຄົ້ນຄ້ວາກ່ຽວ ກັບການດໍາເນີນທຸລະກິດທີ່ກ່ຽວພັນກັບການຊື້ຊັບສິນ ແລະ ມີການລາຍງານຕໍ່ກອງຄະນະກໍາມະການ ພິຈາລະນາ, ສະໜອງຂໍ້ມູນພື້ນຖານໃຫ້ບັນດາສະມາຊິກສະພາບໍລິຫານໃນການຕັດສິນໃຈ.

6.3 ຄະນະກໍາມະການຄັດເລືອກ ໄດ້ດໍາເນີນວຽກງານການຄັດເລືອກສະມາຊິກສະພາບໍລິຫານສະ ໄໝທີ່ 2 ໂດຍອີງຕາມຄໍາແນະນໍາວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນ ສະບັບວັນທີ 30 ເມສາ 2019 ເພື່ອລາຍງານ ແລະ ສະໜອງຂໍ້ມູນພື້ນຖານໃຫ້ກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນໃນ ການພິຈາລະນາ ແລະ ຮັບຮອງ.

6.4 ຄະນະກໍາມະການກວດສອບໄດ້ດໍາເນີນການກວດສອບບັນຊີຂອງບໍລິສັດໄຕມາດ 1 ໂດຍ ອີງໃສ່ແຜນການວຽກເພື່ອຮັບປະກັນຄວາມຖືກຕ້ອງຂອງບົດລາຍງານການເງິນຂອງບໍລິສດ.

7. ຄວາມຮັບຜິດຊອບຕໍ່ສັງຄົມຂອງອົງກອນ

ໃນ ເດືອນມີຖຸນາ 2020, ເນື່ອງໃນໂອກາດຄົບຮອບ 5 ປີຂອງການເປີດໂຕ, ສູນການຄ້າວຽງຈັນ ເຊັ້ນເຕີ ໄດ້ຈັດງານບໍລິຈາກເລືອດເພື່ອການກຸສົນຂະໜາດໃຫຍ່ໂດຍການຮ່ວມມືກັບອົງການກາແດງລາວ, ມີປະຊາຊົນຫລາຍກວ່າ 630 ຄົນໄດ້ເຂົ້າຮ່ວມບໍລິຈາກເລືອດ ແລະ ມອບເງິນບໍລິຈາກເພື່ອການກຸສົນ ເປັນຈຳນວນເງິນ 13.038 ລ້ານ ກີບ ເພື່ອປະກອບສ່ວນໃນວຽກງານການກຸສົນຂອງປະເທດລາວ.



8.ແຜນການດຳເນີນທຸລະກິດ 6 ເດືອນທ້າຍປີ2020

8.1 ປະຕິບັດຕາມແຜນການນຳໃຊ້ທຶນທີ່ລະດົມໄດ້, ກະກຽມວຽກງານທີ່ກ່ຽວຂ້ອງສຳລັບການຮັບຊື້ຊັບສິນ, ຫຼັງຈາກໄດ້ມີການອະນຸມັດຕາມລະບຽບກົດໝາຍກ່ຽວຂ້ອງແລ້ວໃຫ້ປະຕິບັດຕາມມະຕິ;

8.2 ສຳລັບວຽກງານສູນການຄ້າ

①ສືບຕໍ່ເພີ່ມທະວີມາດຕະການຄວບຄຸມການລະບາດໃນສະພາບການທີ່ມີຜົນກະທົບຈາກການລະບາດຂອງໂຄວິດ 19, ສ້າງສະພາບແວດລ້ອມການຊື້ຂາຍທີ່ປອດໄພ.

②ພາຍໃຕ້ການຮັບປະກັນຄວາມປອດໄພ, ໃນ 6 ເດືອນທ້າຍປີ, ພວກເຮົາຈະລວມກິດຈະກຳການຄ້າແບບດັ້ງເດີມກັບກິດຈະກຳການຄ້າແບບນະວັດຕະກຳ, ວັດທະນະທຳ ເຊັ່ນ: ການສະແດງມໍເຕີໂຊ, ວັດທະນະທຳກາເຟລາວ ແລະ ອື່ນໆ, ສ້າງຜົນກຳໄລຈາກການໃຫ້ເຊົ່າ, ແລະ ເພີ່ມທະວີການຮ່ວມມືກັບ

ບັນດາວິສາຫະກິດທີ່ມີຊື່ສຽງໃນລາວ. ສຸມໃສ່ງານການວາງສະແດງສິນຄ້າທີ່ມີຊື່ສຽງ ແລະ ກິດຈະກຳ ສົ່ງເສີມວັດທະນະທຳ.

③ປັບປຸງ ແລະ ເສີມຊ່ອງທາງການຄ້າອອນໄລນ໌ທາງເຟສບຸກໃຫ້ສົມບຸນ, ທ້າຍປີນີ້ຈະສືບຕໍ່ລົງເລິກ ການດຳເນີນງານຂອງການຊື້ຂາຍສິນຄ້າອອນໄລນ໌, ປັບປຸງຍີ່ຫໍ້ຂອງຜະລິດຕະພັນໃນສູນການຄ້າອອນໄລນ໌.

8.3 ສຳລັບວຽກງານອາຄານສຳນັກງານ

①ເຖິງແມ່ນວ່າຍັງທົນການລະບາດຂອງພະຍາດໂຄວິດ 19 ກໍຕາມ ແຕ່ຍັງເສີບຕໍ່ພະຍາຍາມຊອກຫາ ລູກຄ້າທີ່ໝົດອາຍຸສັນຍາເຊົ່າໃນອາຄານສຳນັກງານອື່ນພາຍໃນລາວ, ແມ່ນສືບຕໍ່ເພີ່ມທະວີການຊອກຫາວິ ສາຫະກິດໃນລາວມາເຊົ່າພື້ນທີ່ຫ້ອງການ.

②ສືບຕໍ່ຊຸກຍູ້ການພັດທະນາໄປຄຽງຄູ່ກັນລະຫວ່າງສູນການຄ້າ ແລະ ອາຄານສຳນັກງານໃຫ້ມີ ສ່ວນຮວມໃນການຈັດກິດຈະກຳ ເຊັ່ນ: ແຈກບັດຄູປອງ, ການຮ່ວມກັນຈັດກິດຈະກຳໂຍຄະ ແລະ ອື່ນໆ, ພະຍາຍາມນຳຜູ້ບໍລິໂພກທີ່ເປັນພະນັກງານເຮັດວຽກຢູ່ອາຄານສຳນັກງານໄປຈັບຈ່າຍໃຊ້ສອຍຢູ່ສູນການຄ້າ , ນຳໃຊ້ກິດຈະກາເພື່ອຍົກສູງຄຸນນະພາບການບໍລິການຂອງອາຄານສຳນັກງານ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ຜູ້ອຳນວຍການ

